**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ 55 /ສພຂ.ຊຍ

ໄຊຍະບູລີ, ວັນທີ 29 ກໍລະກົດ 2025.

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ
## ວ່າດ້ວຍການຮັບຮອງເອົາບົດລາຍງານການເຄື່ອນໄຫວ
## ວຽກງານໃນໄລຍະແຕ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຫາ ເທື່ອທີ 9
## ແລະ ແຜນການຮອດກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາປະຊາຊົນແຂວງ ຊຸດທີ II

- ອີງຕາມ ມາດຕາ 18, ມາດຕາ 36 ຂໍ້ 2.2.1.1 ຂອງກົດໝາຍວ່າດ້ວຍ ການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82 /ສພຊ, ລົງວັນທີ 30 ມິຖຸນາ 2020;
- ອີງຕາມ ມະຕິຂອງສະພາປະຊາຊົນແຂວງ ສະບັບເລກທີ 160/ສພຂ.ຊຍ, ລົງວັນທີ 30 ທັນວາ 2024 ວ່າດ້ວຍການ ຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານໃນໄລຍະແຕ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຫາ ເທື່ອທີ 9 ແລະ ແຜນການຮອດກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາປະຊາຊົນແຂວງ ຊຸດທີ II
- ອີງຕາມ ບົດລາຍງານ ການເຄື່ອນໄຫວວຽກງານແຕ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຫາ ເທື່ອທີ 9 ແລະ ແຜນການຮອດກອງປະຊຸມສະໄໝສາມັນ ເທື່ອທີ 10 ໃນກອງປະຊຸມ ຄະນະປະຈຳສະພາປະຊາຊົນແຂວງ ຄັ້ງວັນທີ 29 ກໍລະກົດ 2025.

ຜ່ານການພິຈາລະນາ ຂອງ ຄະນະປະຈຳສະພາປະຊາຊົນແຂວງ ຕໍ່ບົດລາຍງານການເຄື່ອນໄຫວວຽກ ແຕ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຫາ ເທື່ອທີ 9 ແລະ ແຜນການຮອດກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາປະຊາຊົນແຂວງ ຊຸດທີ II

**ກອງປະຊຸມ ຕົກລົງ:**

**ມາດຕາ 1 ຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານໃນໄລຍະແຕ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຫາ ເທື່ອທີ 9 ດັ່ງນີ້:**

**1. ດ້ານນິຕິກຳ**

ຄົ້ນຄວ້າປະກອບຄຳເຫັນໃສ່ຮ່າງລັດຖະທຳມະນູນ ສະບັບ ປີ 2025 ແລະ ກົດໝາຍ 11 ສະບັບ, ໃນນີ້ສ້າງໃໝ່ 5 ສະບັບ, ປັບປຸງ 6 ສະບັບ; ປະກອບຄຳເຫັນໃສ່ຮ່າງນິຕິກຳໃຕ້ກົດໝາຍຂັ້ນສູນກາງ ໄດ້ 6 ສະບັບ; ໂຄສະນາເຜີຍແຜ່ກົດໝາຍຂົງເຂດສະພາ 4 ສະບັບ ແລະ ລົງຕິດຕາມຊຸກຍູ້ ພະແນກການ, ອົງການ, ກົມກອງ ປະເມີນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍຂອງແຂວງ 4 ສະບັບ ໃນນີ້ໄດ້ນຳມາຄົ້ນຄວ້າ ພິຈາລະນາ ແລະ ຮັບຮອງເອົາ 3 ສະບັບ ຄື:❶ ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງ, ນຳໃຊ້ ແລະ ອະນຸລັກຊ້າງບ້ານ ❷ ຂໍ້ຕົກລົງ ວ່າດ້ວຍກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ, ❸ ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງ, ພັດທະນາ ແລະ ບໍລິຫານຕົວເມືອງໄຊຍະບູລີ.

**2. ການຕົກລົງບັນຫາພື້ນຖານຂອງທ້ອງຖິ່ນ**

ຄົ້ນຄວ້າຜ່ານກອງປະຊຸມສະໄໝສາມັນ ເທື່ອທີ 8 ມີ 22 ເນື້ອໃນ, ພິຈາລະນາ ຮັບຮອງເອົາ ມະຕິ 9 ສະບັບ; ຜ່ານກອງປະຊຸມສະໄໝວິສາມັນ ເທື່ອທີ 1 ມີ 2 ເນື້ອໃນ, ຮັບຮອງເອົາ ມະຕິ 1 ສະບັບ; ຜ່ານກອງປະຊຸມຄະນະປະຈຳ ມີ 28 ເນື້ອໃນ, ພິຈາລະນາ, ຮັບຮອງເອົາ ມະຕິ 9 ສະບັບ; ໄດ້ຄົ້ນຄວ້າ, ພິຈາລະນາ ແລະ

ຮັບຮອງເອົາການສະເໜີແຕ່ງຕັ້ງ ປະທານຄະນະກຳມະການປົກຄອງເມືອງ 11 ເມືອງ, ການສະເໜີຍົກຍ້າຍເຈົ້າເມືອງ, ຫົວໜ້າພະແນກການຂອງແຂວງ ຕາມການສະເໜີຂອງເຈົ້າແຂວງ 1 ທ່ານ, ຄົ້ນຄວ້າ, ນຳສະເໜີແຕ່ງຕັ້ງຜູ້ພິພາກສາ ຂອງສານປະຊາຊົນແຂວງ 3 ທ່ານ ແລະ ສະພາປະຊາຊົນແຂວງ 3 ທ່ານ.

**3. ດ້ານການຕິດຕາມ ກວດກາ**

1.) ຕິດຕາມຊຸກຍູ້ ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ໄດ້ທັງໝົດ 6 ຄັ້ງ, ມີ 16 ຈຸດ, ໃນນີ້ມີ 8 ໂຄງການ ແລະ 8 ບ້ານ;

2.) ຮ່ວມກັບກຳມາທິການ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ກຳມາທິການ ເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ສະພາແຫ່ງຊາດ ລົງຕິດຕາມ ກວດກາ ມະຕິກອງປະຊຸມສະພາແຫ່ງຊາດ ຢູ່ດ່ານສາກົນປາງມອນ, ນ້ຳເງິນ, ກອງພົນທະຫານຮາບທີ 2, ກອງຮ້ອຍຊາຍແດນ 150, 151, 152;

3.) ຮັບຄຳຮ້ອງຂໍຄວາມເປັນທຳ 7 ເລື່ອງ, ແກ້ໄຂສຳເລັດ 7 ເລື່ອງ ແລະ ສຳເລັດໃນການແກ້ໄຂ ຄຳສະເໜີ-ສາຍດ່ວນ ທັງໝົດ 116 ເນື້ອໃນ.

**4. ການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາປະຊາຊົນແຂວງ**

ສະພາປະຊາຊົນແຂວງ ໄດ້ຈັດກອງປະຊຸມຝຶກອົບຮົມສ້າງຄວາມເຂັ້ມແຂງ ໃຫ້ສະມາຊິກສະພາປະຊາຊົນແຂວງແລະ ພະນັກງານນຳພາຫຼັກແຫຼ່ງຂອງແຂວງ-ເມືອງ 3 ຄັ້ງ ມີ 6 ຫົວຂໍ້ ແລະ ເຂົ້າຮ່ວມນຳສະພາແຫ່ງຊາດ 4 ຄັ້ງ ມີ 4 ຫົວຂໍ້; ຝຶກອົບຮົມຫົວຂໍ້ສະເພາະການນຳ 1 ຄັ້ງ, ມີ 1 ທ່ານ, ຍົກລະດັບວິຊາສະເພາະປະລິນຍາໂທ 3 ທ່ານ ທິດສະດີ-ການເມືອງ ຂັ້ນກາງ 1 ທ່ານ, ຂັ້ນຕົ້ນ 3 ທ່ານ, ຍິງ 1 ທ່ານ ແລະ ກົດໝາຍໄລຍະສັ້ນ 45 ວັນ 1 ທ່ານ;

**5. ການເຄື່ອນໄຫວຂອງສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງ**

1) ໄດ້ລົງພົບປະ ປະຊາຊົນຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ IX , ສະພາປະຊາຊົນແຂວງ ຊຸດທີ II ໄດ້ ທັງໝົດ 157 ຈຸດ, ໃນນີ້ ສຳນັກງານ, ກົມກອງ 13 ຈຸດ, ບ້ານ 144 ຈຸດ, ມີຜູ້ເຂົ້າຮ່ວມ ທັງໝົດ 21.959 ຄົນ, ຍິງ 11.043 ຄົນ. ມອບເຄື່ອງຊ່ວຍເຫຼືອເປັນຕົ້ນ: ລົດຖີບ, ຄອມພິວເຕີ, ອຸປະກອນການຮຽນ ແລະ ເງິນສົດ ໃຫ້ການຈັດຕັ້ງ ແລະ ຜູ້ມີສິດເລືອກຕັ້ງ 15 ພາກສ່ວນ ລວມມູນຄ່າ 181.500.000 ກີບ (ໜຶ່ງຮ້ອຍ ແປດສິບເອັດລ້ານ ຫ້າແສນກີບ);

**6. ການເຄື່ອນໄຫວວຽກງານການຕ່າງປະເທດ**

ສະພາປະຊາຊົນແຂວງ ໄດ້ເອົາໃຈໃສ່ເຄື່ອນໄຫວວຽກງານການຕ່າງປະເທດຮ່ວມ ກັບ ສະພາແຫ່ງຊາດ, ກຳມາທິການສະພາແຫ່ງຊາດ ແລະ ອົງການປົກຄອງແຂວງ ຕາມພາລະບົດບາດຂອງຕົນ, ເຂົ້າຮ່ວມສະເຫຼີມສະຫຼອງວັນສຳຄັນຕ່າງໆ ຂອງບັນດາປະເທດເພື່ອນມິດຍຸດທະສາດ.

**ມາດຕາ 2 ຮັບຮອງເອົາທິດທາງແຜນການເຄື່ອນໄຫວວຽກງານຮອດກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງ ສະພາປະຊາຊົນແຂວງ ຊຸດທີ II.**

ກອງປະຊຸມເຫັນດີ ຮັບຮອງເອົາທິດທາງແຜນການ ເຄື່ອນໄຫວວຽກງານ ຮອດກອງປະຊຸມສະໄໝສາມັນ ເທື່ອທີ 10 ດັ່ງນີ້:

**1. ການປະຕິບັດພາລະບົດບາດດ້ານນິຕິກຳ**

1.) ສືບຕໍ່ເຜີຍແຜ່ລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍຂອງແຂວງ ຢູ່ສຳນັກງານ, ອົງການ, ກົມກອງ ອ້ອມຂ້າງແຂວງ, ເມືອງ, ບ້ານ ແລະ ປະກອບຄຳເຫັນໃສ່ຮ່າງກົດໝາຍ ຕາມແຜນຂອງສະພາແຫ່ງຊາດ;

2.) ຊຸກຍູ້ອົງການປົກຄອງແຂວງ ຈັດຕັ້ງການປະເມີນ, ປັບປຸງ ນິຕິກຳໃຕ້ກົດໝາຍຂອງແຂວງ ໃຫ້ໄດ້ 8 ສະບັບ, ໃນນີ້: **ປະເມີນ 1 ສະບັບ** ຄື: ❶ ຂໍ້ຕົກລົງ ວ່າດ້ວຍການປະຢັດງົບປະມານຂອງລັດ; **ປັບປຸງ 7 ສະບັບ** ຄື: ❶ ຕົກລົງ ວ່າດ້ວຍການສົ່ງເສີມກະສິກຳຍືນຍົງ, ❷ ຂໍ້ຕົກລົງ ວ່າດ້ວຍ ການຄຸ້ມຄອງ ແລະ ການພັດທະນາຊົນລະປະທານ, ❸ ຂໍ້ຕົກລົງ ວ່າດ້ວຍການສ້າງຕັ້ງ ແລະ ຄຸ້ມຄອງກອງທຶນພັດທະນາຂັ້ນບ້ານ, ❹ ຂໍ້ຕົກລົງ ວ່າ

ດ້ວຍການກຳນົດເຂດປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ,❺ ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງ, ນຳໃຊ້ ແລະ ອະນຸລັກຊ້າງບ້ານ,❻ ຂໍ້ຕົກລົງ ວ່າດ້ວຍກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ,❼ ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງ, ພັດທະນາ ແລະ ບໍລິຫານຕົວເມືອງໄຊຍະບູລີ ແລະ ສ້າງຮ່າງ ແຜນການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍຂອງແຂວງ ໄລຍະ 5 ປີ (2026-2030).

**2. ການປະຕິບັດພາລະບົດບາດດ້ານການຕົກລົງບັນຫາສຳຄັນຂອງທ້ອງຖິ່ນ**

**1.)ກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາປະຊາຊົນແຂວງ ຊຸດທີ II ຄາດຄະເນຈະໄດ້ຄົ້ນຄວ້າ ພິຈາລະນາ ຮັບຮອງເອົາ ບັນດາເນື້ອໃນ ດັ່ງນີ້:**

(1) ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ 5 ປີ (2021-2025) ແລະ ປະຈຳປີ 2025 ຂອງແຂວງ; ຮ່າງທິດທາງແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ 5 ປີ (2026-2030); ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການໄຂບັນຫາຢາເສບຕິດ ໃນໄລຍະປີ 2024-2025;

(2) ບົດລາຍງານ ຂອງສານປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານ 5 ປີ (2021-2025) ແລະ ປະຈຳປີ 2025; ຮ່າງທິດທາງແຜນການ 5 ປີ ( 2026-2030);

(3) ບົດລາຍງານຂອງອົງການໄອຍະການປະຊາຊົນແຂວງກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025) ແລະ ປະຈຳປີ 2025 ; ຮ່າງທິດທາງແຜນການ 5 ປີ ( 2026-2030);

(4) ບົດລາຍງານ ຂອງອົງການກວດກສອບປະຈຳພາກເໜືອ 1 ກ່ຽວກັບການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານ 5 ປີ (2021-2025) ແລະ ປະຈຳປີ 2025; ຮ່າງທິດທາງແຜນການ 5 ປີ (2026-2030); ບົດລາຍງານຜົນຂອງການກວດສອບບົດສະຫຼຸບງົບປະມານຂາດຕົວການຈັດຕັ້ງແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2024;

(5) ບົດລາຍງານຂອງອົງການກວດກາລັດແຂວງ ກ່ຽວກັບການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານ 5 ປີ (2021-2025) ແລະ ປະຈຳປີ 2025; ຮ່າງທິດທາງແຜນການ 5 ປີ ( 2026-2030); ບົດລາຍງານຜົນການກວດກາ ຕາມຜົນການກວດສອບ ປີ 2023;

(6) ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານ 5 ປີ (2021-2025) ແລະ ປະຈຳປີ 2025; ຮ່າງທິດທາງແຜນການ 5 ປີ ( 2026-2030) ຂອງສະພາປະຊາຊົນແຂວງ ຊຸດທີ III;

(7) ພິຈາລະນາ ແລະ ຮັບຮອງເອົາການປະເມີນ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ຂອງແຂວງ.

(8) ຄົ້ນຄ້ວາ, ພິຈາລະນາ, ຮັບຮອງ ເອົາກົງຈັກການຈັດຕັ້ງຂັ້ນແຂວງ, ຂັ້ນຕາແສງ; ການແຕ່ງຕັ້ງ, ຍົກຍ້າຍ ປະທານ, ຮອງປະທານ ຄະນະກຳມະການປົກຄອງແຂວງ, ຫົວໜ້າພະແນກການ, ອົງການກົມກອງ ຕາມການສະເໜີ ຂອງເຈົ້າແຂວງ;

(9) ຮັບຟັງບົດປະກອບຄຳເຫັນຂອງ ອົງການແນວລາວສ້າງຊາດແຂວງ, ຕາງໜ້າສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ຕໍ່ການເຄື່ອນໄຫວວຽກງານປະຈຳປີ 2025 ຂອງສະພາປະຊາຊົນແຂວງ ຊຸດທີ II;

**2.) ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ:**

ຄົ້ນຄວ້າພິຈາລະນາ ບັນຫາສຳຄັນພື້ນຖານຂອງແຂວງ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ, ກົດໝາຍ ຮັບປະກັນ ຄວາມຖືກຕ້ອງຕາມແນວທາງນະໂຍບາຍຂອງພັກ, ສອດຄ່ອງຕາມລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ;

ສົມທົບ ກັບ ຄະນະປະຈຳສະພາແຫ່ງຊາດ, ຄະນະພັກອົງການປົກຄອງແຂວງ ກະກຽມບັນດາເນື້ອໃນ, ບຸກຄະລາກອນ, ຂະບວນການດ້ານຕ່າງໆ ເພື່ອກະກຽມໃຫ້ແກ່ການເລືອກຕັ້ງ ສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງ ຊຸດທີ III.

**3. ການປະຕິບັດພາລະບົດບາດ ດ້ານການຕິດຕາມກວດກາ**

1.) ຕິດຕາມກວດກາ ຊຸກຍູ້ ການເຜີຍແຜ່ ແລະ ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ໃນແຕ່ລະຂົງເຂດ ຕິດພັນ ກັບ ມະຕິກອງປະຊຸມສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ເປັນຕົ້ນ: ການປະຕິບັດຄຳຕັດສິນຂອງສານ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານຂອງແຂວງ, ໂຄງການລົງທຶນຂອງລັດ-ເອກະຊົນ, ຜົນກະທົບຈາກໂຄງການລົງທຶນຕໍ່ສິ່ງແວດລ້ອມ ຕໍ່ການດຳລົງຊີວິດຂອງປະຊາຊົນບັນດາເຜົ່າ ແລະ ອື່ນໆ;

2.) ຕິດຕາມກວດກາຜ່ານກົນໄກການດຳເນີນກອງປະຊຸມ ຮ່ວມ ລະຫວ່າງ ຄະນະປະຈຳສະພາປະຊາຊົນແຂວງ ກັບ ອົງການປົກຄອງແຂວງ, ຄະນະປະຈຳແນວລາວສ້າງຊາດ, ສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ, ອົງການກວດກາລັດແຂວງ, ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ ແລະ ຕິດຕາມກວດກາຜ່ານກົນໄກການດຳເນີນກອງປະຊຸມຄົບຄະນະປະຈຳປີ 2025 ຂອງບັນດາຄະນະກຳມະການ;

3.)ຕິດຕາມຊຸກຍູ້ ອົງການປົກຄອງແຂວງ ປັບປຸງກົງຈັກການຈັດຕັ້ງຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນຕາແສງ; ການແກ້ໄຂຄຳສະເໜີ, ສາຍດ່ວນ, ຄຳຮ້ອງຂໍຄວາມເປັນທຳ ທີ່ສະເໜີຜ່ານສະພາປະຊາຊົນແຂວງ ແລະ ຜ່ານແນວລາວສ້າງຊາດແຂວງ;

4.)ສົມທົບ ຄະນະປະຈຳແນວລາວສ້າງຊາດ ສ້າງແຜນຮ່ວມກັນລົງພົບປະຢ້ຽມຢາມປະຊາຊົນ ເຂດຫ່າງໄກສອກຫຼີກ, ບ້ານລຽບຕາມຊາຍແດນ ເພື່ອກຳຄຳຄິດຄຳເຫັນ ແລະ ນຳເອົາກົດໝາຍ, ນິຕິກຳໃຕ້ກົດໝາຍໄປເຜີຍແຜ່ໃຫ້ປະຊາຊົນເຂດດັ່ງກ່າວ ໄດ້ເຊື່ອມຊຶມ, ກຳແໜ້ນ ດີຂຶ້ນ;

5.) ຕິດຕາມກວດກາດ້ວຍການຈັດຕັ້ງການປະເມີນ ການປະຕິບັດໜ້າທີ່ ຂອງບຸກຄະລາກອນ ທີ່ສະພາປະຊາຊົນແຂວງເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ຕາມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກຳນົດໄວ້.

**4. ການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາປະຊາຊົນແຂວງ**

1.) ສືບຕໍ່ເຂົ້າຮ່ວມຝຶກອົບຮົມຍົກສູງຂີດຄວາມສາມາດດ້ານຕ່າງໆ ຕາມແຜນຂອງສະພາແຫ່ງຊາດ; ຍາດແຍ່ງງົບປະມານ ຈາກສະພາແຫ່ງຊາດ, ອົງການປົກຄອງແຂວງ ແລະ ພາກສ່ວນຕ່າງໆ ເພື່ອຈັດຝຶກອົບຮົມສ້າງຄວາມເຂັ້ມແຂງ ໃຫ້ສະມາຊິກສະພາປະຊາຊົນແຂວງ ແລະ ພະນັກງານຊ່ວຍວຽກ;

2.) ສົມທົບ ຄະນະປະຈຳສະພາແຫ່ງຊາດ, ຄະນະພັກ, ອົງການປົກຄອງແຂວງ, ເມືອງ ຄົ້ນຄວ້າ, ກະກຽມປັບປຸງ ກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ ຂອງສະພາປະຊາຊົນແຂວງ ແລະ ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ເພື່ອຮັບປະກັນເຮັດໃຫ້ກົງຈັກສະພາປະຊາຊົນແຂວງ ຊຸດທີ III ມີຄວາມເຂັ້ມແຂງ;

3.)ສືບຕໍ່ຄົ້ນຄວ້າ, ເກັບກໍາ ຜົນງານການເຄື່ອນໄຫວຂອງສະພາປະຊາຊົນແຂວງ ເພື່ອຮຽບຮຽງ ຈັດພິມປຶ້ມ ວາລະສານ 40 ປີ ແຫ່ງການເຕີບໃຫຍ່ຂະຫຍາຍຕົວຂອງສະພາປະຊາຊົນແຂວງ ໄຊຍະບູລີ;

4.)ເພີ່ມທະວີການປະສານງານ ລະຫວ່າງ ສະພາປະຊາຊົນແຂວງ ກັບ ພາກສ່ວນທີ່ກ່ຽວຂ້ອງ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງ ມີຄວາມເຂັ້ມແຂງຂຶ້ນກວ່າເກົ່າ;

**5. ດ້ານການເຄື່ອນໄຫວຂອງສະມາຊິກສະພາປະຊາຊົນແຂວງ ປະຈໍາເຂດເລືອກຕັ້ງເມືອງ**

1) ຄະນະສະມາຊິກສະພາປະຊາຊົນແຂວງ ປະຈໍາເຂດເລືອກຕັ້ງ ເປັນເຈົ້າການຄົ້ນຄວ້າເນື້ອໃນ ເພື່ອເຂົ້າຮ່ວມກອງປະຊຸມສະພາປະຊາຊົນແຂວງ; ເພີ່ມທະວີຄວາມຮັບຜິດຊອບ ໃນການໃຫ້ຄໍາປຶກສາທາງດ້ານກົດໝາຍແກ່ປະຊາຊົນ; ສະຫຼຸບຕີລາຄາການເຄື່ອນໄຫວວຽກງານ ໃນໄລຍະ 5 ປີ (2021-2025) ເພື່ອສະໜອງຂໍ້ມູນໃຫ້ສະພາປະຊາຊົນແຂວງ ກະກຽມກອງປະຊຸມທ້າຍສະໄໝ ໃຫ້ມີເນື້ອໃນຄົບຖ້ວນຮັດກຸມ; ຕັ້ງໜ້າລົງເຜີຍແຜ່ຜົນສໍາເລັດກອງປະຊຸມສະໄໝສາມັນ ເທື່ອທີ 9 ແລະ ເທື່ອທີ 10; ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ກະກຽມວຽກງານຮອບດ້ານ ໃຫ້ແກ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງ ຊຸດທີ III;

2) ຄະນະປະຈໍາສະພາປະຊາຊົນແຂວງ ເປັນເຈົ້າການຈັດ ກອງປະຊຸມສະຫຼຸບຖອດຖອນບົດຮຽນ ຮ່ວມກັບ ຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງ ທີ 7 ແລະ ຄະນະສະມາຊິກສະພາປະຊາຊົນແຂວງ ປະຈໍາເຂດເລືອກຕັ້ງເມືອງ ໃຫ້ໄດ້ 2 ຄັ້ງ;

**6. ການເຄື່ອນໄຫວວຽກງານການຕ່າງປະເທດ**

ເພີ່ມທະວີການຈັດຕັ້ງປະຕິບັດແນວທາງການຕ່າງປະເທດຂອງພັກ ສ້າງເງື່ອນໄຂອໍານວຍຄວາມສະດວກໃຫ້ສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ພະນັກງານ-ລັດຖະກອນເຂົ້າຮ່ວມເຄື່ອນໄຫວ ກັບ ລັດຖະສະພາ ບັນດາປະເທດເພື່ອນມິດຍຸດທະສາດ ພາກພື້ນ ແລະ ສາກົນ ເພື່ອເສີມຂະຫຍາຍສາຍພົວພັນການຮ່ວມມື ແລະ ຍາດແຍ່ງບົດຮຽນຈາກບັນດາປະເທດຕ່າງໆ.

**ມາດຕາ 3 ການຈັດຕັ້ງປະຕິບັດ**

ຄະນະປະຈໍາສະພາປະຊາຊົນແຂວງ, ບັນດາຄະນະກໍາມະການ, ຄະນະເລຂາທິການ ແລະ ຄະນະສະມາຊິກສະພາປະຊາຊົນແຂວງ ປະຈໍາເຂດເລືອກຕັ້ງເມືອງ, ພະແນກການ, ອົງການ, ກົມກອງ ທີ່ກ່ຽວຂ້ອງຂອງແຂວງ, ເມືອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ມະຕິສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 4 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

**ເພັງນິລັນ ຄໍາພັນເພັງ**